ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ 1210 /ພບ

ນະຄອນຫລວງວຽງຈັນ, ວັນທີ 17 AUG 2020

# ຄຳແນະນຳ

# ກ່ຽວກັບມາດຕະຖານການລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 296/ນຍ, ລົງວັນທີ 4 ກັນຍາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພະລັງງານ ແລະ ບໍ່ແຮ່.

**ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ອອກຄຳແນະນຳ:**

## 1. ຈຸດປະສົງ

ຄຳແນະນຳສະບັບນີ້ກຳນົດມາດຕະຖານການລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ແນໃສ່ເຮັດໃຫ້ການປະກອບເອກະສານ ແລະ ການຄົ້ນຄວ້າພິຈາລະນາໃຫ້ອະນຸຍາດລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຈະແຈ້ງ, ຊັດເຈນ, ໂປ່ງໃສ, ຈຳກັດສະພາບການຈັບຈອງເນື້ອທີ່ສຳປະທານໄວ້ ເພື່ອລັກລອບມອບໂອນ, ຂາຍສິດສຳປະທານໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານ ແລະ ຮັບປະກັນໃຫ້ການປະຕິບັດແຜນການຄຸ້ມຄອງການລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດມີປະສິດທິຜົນ ແລະ ນຳປະໂຫຍດສູງສຸດມາໃຫ້ລັດຖະບານ, ທ້ອງຖິ່ນ ແລະ ຜູ້ລົງທຶນ.

## 2. ມາດຕະຖານການລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ

ມາດຕະຖານການລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ແມ່ນກຳນົດໝາຍກ່ຽວກັບເນື້ອທີ່, ທຶນ, ປະເພດແຮ່ທາດ, ປະສົບການທີ່ຢັ້ງຢືນສັກກາຍະພາບຄວາມອາດສາມາດເປັນໄປໄດ້ໃນການຂໍອະນຸຍາດລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ.

## 3. ເນື້ອທີ່ສຳປະທານ

ເນື້ອທີ່ສຳປະທານແມ່ນຂອບເຂດເນື້ອທີ່ການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ທີ່ລັດຖະບານ ໄດ້ຕົກລົງມອບສິດໃຫ້ຜູ້ລົງທຶນໃນກິດຈະການດ້ານແຮ່ທາດ. ຜູ້ລົງທຶນ ຫຼື ບໍລິສັດໜຶ່ງມີສິດຂໍສຳປະທານເນື້ອທີ່ ທີ່ມີແຮ່ທາດປະເພດຕ່າງໆໃນເວລາດຽວກັນໄດ້ຕອນໜຶ່ງ ຢູ່ໃນຂອບເຂດທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍແຮ່ທາດ.

## 4. ຂອບເຂດການນຳໃຊ້

ຄຳແນະນຳສະບັບນີ້ ນຳໃຊ້ສຳລັບອົງການລັດ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດທີ່ມີຈຸດປະສົງລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຈາກລັດຖະບານ (ຄະນະກຳມະການສົ່ງເສີມ ແລະ ຄຸ້ມ

ຄອງການລົງທຶນຂັ້ນສູນກາງ) ຫຼື ອົງການປົກຄອງທ້ອງຖິ່ນ (ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນແຂວງ) ຕາມຂອບເຂດສິດທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**5. ກໍານົດເນື້ອທີ່ເພື່ອໃຫ້ຊອກຄົ້ນແຮ່ທາດ**

ກໍານົດເນື້ອທີ່ເພື່ອໃຫ້ຊອກຄົ້ນແຮ່ທາດ ມີດັ່ງນີ້:

| ລ/ດ | ປະເພດແຮ່ທາດ | ເນື້ອທີ່ບໍ່ເກີນ (ກມ$^2$) |
|---|---|---|
| 1 | **ໝວດແຮ່ທາດໂລຫະ** | |
| 1.1 | ໂລຫະປະເສີດ (Precious Metals):<br>ຄໍາ (Au), ເງິນ (Ag), ຄໍາຂາວ (Pt),... | 200 ກມ$^2$ |
| 1.2 | ໂລຫະພື້ນຖານ (Base Metals):<br>ທອງ (Cu), ຊືນ (Pb), ສັງກະສີ (Zn), ອາລູມີນຽມ (Al),... | 200 ກມ$^2$ |
| 1.3 | ໂລຫະຜົວພັນກັບເຫຼັກ (Ferrous Metals): | |
| | – ເຫຼັກ (Fe), ມັງການ (Mn), ໂຄຣມຽມ (Cr), ນິກແກນ (Ni), ໂກບານ (Co),... | 200 ກມ$^2$ |
| | – ຕີຕານ (Ti), ມາກເນຊຽມ (Mg), ປີຣິດ (Pyrite),... | 100 ກມ$^2$ |
| 1.4 | ໂລຫະມີໜ້ອຍ (Minor Metals):<br>ອັງຕີມອນ (Sb), ບີສມຸດ (Bi), ບາຫຼອດ (Hg), ເບຣີລຽມ (Be), ຢູຣານຽມ (U), ທໍຣຽມ (Th),... | 200 ກມ$^2$ |
| 1.5 | ໂລຫະກົ່ວ (Sn), ຕັງສະແຕນ (ໂວນຟຣາມ W), ໂມລິບແດນ (Mo),... | 200 ກມ$^2$ |
| 2 | **ໝວດແຮ່ທາດອະໂລຫະ** | |
| 2.1 | ແກ້ວ/ຫີນປະເສີດ ແລະ ເຄິ່ງປະເສີດ (Precious and Semi-Precious Stone):<br>ເພັດ (Diamond), ຣູບີ (Ruby), ມໍລະກົດ (Emerald), ຊັບເຟຍ (Sapphire), ອໍາພັນ (Amber), ຢົກ (Jade), ອາເມຕິສ (Amethyst), ເບຣີລ (Beryl), ກາກເນັດ (Garnet), ສະປີແນນ (ມະໜາບົ) (Spinel), ໂຕປັສ (Topaz), ເຊີກອນ (Zircon), ອາເລັກຊານດຣິດ (Alexandrite), ຕອກມາລີນ (Tourmaline),... | 5 ກມ$^2$ |
| 2.2 | ແຮ່ທາດອະໂລຫະ ສໍາລັບອຸດສາຫະກໍາ (Industrial Minerals):<br>– ຫີນປູນ (Limestone), ຫີນປູນໂດໂລມິດ (Dolomite), ຫີນອ່ອນ (Marble), ອາລູນິດ (Alunite), ບາຣິດ (Barite), ແຟລສະປາ (Feldspar), ຟຣູໂອຣິດ (Fluorite), ໂຟດສະຟັດ (Phosphate), ກຣາຟິດ (Graphite), ມາກເນຊິດ (Magnesite), ມາດ (Sulphur), ປີໂຣຟີລິດ (Pyrophyllite), ອາເບສໂຕສ (Asbestos), ເບັນໂຕນິດ (Bentonite),... | 10 ກມ$^2$ |
| | – ດິນໜຽວ (Clay), ກາວແລງ (Kaolin), ຕານ (Talc), ຄລໍຣິດ (Chlorite), ມີກາ (Mica), ຊາຍຜະລິດແກ້ວ (Quartz sand), ແກ້ວນາງຟານ (Quartz crystal),... | 2 ກມ$^2$ |

| ລ/ດ | ປະເພດແຮ່ທາດ | ເນື້ອທີ່ບໍ່ເກີນ ($ກມ^2$) |
|---|---|---|
| 2.3 | ແຮ່ທາດອະໂລຫະ ສໍາລັບການກໍ່ສ້າງ (Construction Minerals): | |
| | – ຫີນປູນ (Limestone), ຫີນປູນໂດໂລມິດ (Dolomite), ກວັກຊິດ (Quartzite), ຫີນຊາຍ (Sandstone), ຫີນບາຊານ (Basalt), ຫີນອັນເດຊິດ (Andesite), ຫີນຣີໂອລິດ (Rhyolite), ຫີນດີໂອຣິດ (Diorite), ຫີນກຣານິດ (Granite), ຫີນກຣາໂນດີໂອຣິດ (Granodiorite),… | 5 $ກມ^2$ |
| | – ດິນໜຽວ (Clay), ກາວແລງ (Kaolin), ຫີນແຮ່ (Gravel), ດິນດໍາ, ດິນແດງ,… | 2 $ກມ^2$ |
| 2.4 | ຫີນປະດັບ (Decorative Stones): ຫີນອ່ອນ (Marble), ຫີນປາໂກດິດ (Pagodite), ຫີນແຊກປັງຕິນ (Serpentine), ຫີນກຣານິດ (Granite), ຫີນເນສ (Gneiss), ຫີນກະດານ (Slate), ແກ້ວນາງຟ້າ (Crystal Quartz),… | 10 $ກມ^2$ |
| 2.5 | ແຮ່ທີ່ພົວພັນກັບເກືອ ແລະ ເກືອປະເພດຕ່າງໆ (Evaporites): | |
| | – ຫີນກາວ (Gypsum), ອານຮີດຣິດ (Anhydrite),… | 50 $ກມ^2$ |
| | – ເກືອກິນ (Halite ),… | 2 $ກມ^2$ |
| | – ເກືອໂປຕາສ (Potash), ເກືອມາເຍຊຽມ (Magnesium chlorite) ແລະ ເກືອອື່ນໆທີ່ພົວພັນ,… | 200 $ກມ^2$ |
| 3 | **ໝວດແຮ່ທາດພະລັງງານເຊື້ອໄຟ** | |
| | – ຖ່ານລິກໄນ (Lignite), ຖ່ານຊັບບິທູມີນັດ (Sub-bituminous), ຖ່ານບິທູມີນັດ (Bituminous), ຖ່ານອັນຕຣາຊິດ (Anthracite),… | 50 $ກມ^2$ |
| | – ກຣາຟິດ (Graphite),… | 10 $ກມ^2$ |
| | – ຖ່ານຕົມ (Peat),… | 10 $ກມ^2$ |
| | – ຫີນດິນດານບັນຈຸນໍ້າມັນ (Oil shale), ຫີນດິນດານບັນຈຸອາຍແກສ (Shale gas),… | 200 $ກມ^2$ |
| 4 | ນໍ້າແຮ່ທາດ (Mineral water), ນໍ້າຮ້ອນໃຕ້ດິນ (Natural thermal water) ເນື້ອທີ່ສໍາປະທານອະນຸຍາດໃຫ້ຕາມຄວາມເໝາະສົມກັບເງື່ອນໄຂ ຕົວຈິງຂອງແຫຼ່ງນໍ້າ ແລະ ຄວາມເປັນໄປໄດ້ຂອງການລົງທຶນ. | |

## 6. ເນື້ອທີ່ສໍາປະທານໂດຍບໍ່ຜ່ານການຊອກຄົ້ນ ແລະ ສໍາຫຼວດແຮ່ທາດ

ເນື້ອທີ່ສໍາປະທານໂດຍບໍ່ຜ່ານການຊອກຄົ້ນ ແລະ ສໍາຫຼວດແຮ່ທາດ (ໝາຍເຖິງເຂດຂໍສໍາປະທານທີ່ມີຂໍ້ມູນຢ່າງພຽງພໍ ເຊິ່ງບໍລິສັດອື່ນ ຫຼື ລັດຖະບານໄດ້ລົງທຶນຊອກຄົ້ນ ແລະ ສໍາຫຼວດແລ້ວ) ລັດຖະບານອາດຈະອະນຸມັດເນື້ອທີ່ສໍາປະທານໃນຂອບເຂດທີ່ມີແຮ່ທາດ ຫຼື ຂອບເຂດເນື້ອທີ່ ທີ່ພົວພັນເຖິງປະລິມານການຂຸດຄົ້ນ ແລະ ອາຍຸສໍາປະທານເທົ່ານັ້ນ.

**7. ການເງິນ ຫຼື ທຶນທີ່ຈະເອົາມາລົງທຶນໃນໄລຍະຂໍຊອກຄົ້ນ ແລະ ສໍາຫຼວດແຮ່ທາດ**

ນິຕິບຸກຄົນ ທີ່ມີຈຸດປະສົງຂໍລົງທຶນໃນກິດຈະການຊອກຄົ້ນ ແລະ ສໍາຫຼວດແຮ່ທາດ ຕ້ອງມີເງິນ ແລະ ຊັບສິນທີ່ເປັນຂອງຕົນເອງ ໂດຍມີໃບຢັ້ງຢືນຖານະການເງິນ (Bank Statement) ຈາກສະຖາບັນການເງິນ ຫຼື ຈາກທະນາຄານໃດໜຶ່ງ ທີ່ມີອາຍຸບໍ່ເກີນ ສາມ ເດືອນ ແລະ ໃບທະບຽນ ຫຼື ໃບແຈ້ງຊັບສິນຢ່າງເປັນທາງການ.

ສໍາລັບ ທຶນຈົດທະບຽນແມ່ນໃຫ້ປະຕິບັດຕາມລະບຽບທີ່ພາກສ່ວນກ່ຽວຂ້ອງວາງອອກ ຫຼື ກົດໝາຍຕ່າງໆທີ່ປະກາດໃຊ້, ສ່ວນເງິນທີ່ຈະໃຊ້ຈ່າຍເຂົ້າໃນໂຄງການແມ່ນໃຫ້ອີງໃສ່ບໍລິມາດຂອງວຽກງານຕົວຈິງ.

ໃນໄລຍະຍື່ນຄໍາຮ້ອງຂໍລົງທຶນຊອກຄົ້ນ, ສໍາຫຼວດແຮ່ທາດ ຜູ້ຂໍອະນຸຍາດລົງທຶນ ຫຼື ບໍລິສັດຕ້ອງແຈ້ງຈໍານວນເງິນທີ່ເປັນຂອງຕົນເອງ ແລະ ຕ້ອງວາງເງິນຄໍ້າປະກັນໂຄງການ ຕາມຂໍ້ຕົກລົງຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 2735/ກຜທ, ລົງວັນທີ 02 ພະຈິກ 2018 ວ່າດ້ວຍການວາງເງິນຄໍ້າປະກັນສໍາລັບກິດຈະການສໍາປະທານ.

**8. ຈໍານວນເງິນທີ່ຕ້ອງແຈ້ງໃນໄລຍະຂໍລົງທຶນຊອກຄົ້ນແຮ່ທາດ.**

ຈໍານວນເງິນທີ່ຕ້ອງແຈ້ງຕໍ່າສຸດສໍາລັບການຂໍລົງທຶນຊອກຄົ້ນແຮ່ທາດ ໄດ້ກໍານົດໄວ້ໃນຕາຕະລາງ ລຸ່ມນີ້:

| ລ/ດ | ປະເພດແຮ່ທາດ | ຈໍານວນເງິນ (US$) |
|---|---|---|
| 1 | ໝວດແຮ່ທາດໂລຫະ | |
| 1.1 | ໂລຫະປະເສີດ (Precious Metals):<br>ຄໍາ (Au), ເງິນ (Ag), ຄໍາຂາວ (Pt),... | 10.000.000 |
| 1.2 | ໂລຫະພື້ນຖານ (Base Metals):<br>ທອງ (Cu), ຊືນ (Pb), ສັງກະສີ (Zn), ອາລູມິນຽມ (Al),... | 8.000.000 |
| 1.3 | ໂລຫະພົວພັນກັບເຫຼັກ (Ferrous Metals): | |
| | – ເຫຼັກ (Fe), ມັງການ (Mn), ໂຄຣມຽມ (Cr), ນິກແກນ (Ni), ໂກບານ (Co),... | 6.000.000 |
| | – ຕີຕານ (Ti), ມາກເຍຊຽມ (Mg), ປີຣິດ (Pyrite),... | 3.000.000 |
| 1.4 | ໂລຫະມີໜ້ອຍ (Minor Metals):<br>ອັງຕີມອນ (Sb), ບີສມຸດ (Bi), ບາຫຼອດ (Hg), ເບຣິລຽມ (Be), ຢູຣານຽມ (U), ທໍຣຽມ (Th),... | 6.000.000 |
| 1.5 | ໂລຫະກົ່ວ (Sn), ຕັງສະແຕນ (ໂວນຟຣາມ W), ໂມລິບແດນ (Mo),... | 6.000.000 |
| 2 | ໝວດແຮ່ທາດອະໂລຫະ | |
| 2.1 | ແກ້ວ/ຫີນປະເສີດ ແລະ ເຄິ່ງປະເສີດ (Precious and Semi-Precious Stone):<br>ເພັດ (Diamond), ຣູບີ (Ruby), ມໍລະກົດ (Emerald), ຊັບເຟຍ (Sapphire), ອໍາພັນ (Amber), ຢົກ (Jade), ອາເມຕິສ (Amethyst), ເບຣິລ (Beryl), ກາກເນັດ (Garnet), ສະປີແນນ (ມະຫານິນ) (Spinel), ໂຕປັສ (Topaz), ເຊີກອນ (Zircon), ອາເລັກຊານດຣິດ (Alexandrite), ຕວກມາລີນ (Tourmaline),... | 4.000.000 |

| ລ/ດ | ປະເພດແຮ່ທາດ | ຈຳນວນເງິນ (US$) |
|---|---|---|
| | | |
| 2.2 | ແຮ່ທາດອະໂລຫະ ສຳລັບອຸດສາຫະກຳ (Industrial Minerals): | |
| | – ຫີນປູນ (Limestone), ຫີນປູນໂດໂລມິດ (Dolomite), ຫີນອ່ອນ (Marble), ອາລູນິດ (Alunite), ບາຣິດ (Barite), ແຟລສະປາ (Feldspar), ຟຣູໂອຣິດ (Fluorite), ໂຟດສະຟັດ (Phosphate), ກຣາຟິດ (Graphite), ມາກເຍຊິດ (Magnesite), ມາດ (Sulphur), ປີໂຣຟີລິດ (Pyrophyllite), ອາເບສໂຕສ (Asbestos), ເບັນໂຕນິດ (Bentonite),… | 1.500.000 |
| | – ດິນໜຽວ (Clay), ກາວແລງ (Kaolin), ຕານ (Talc), ຄລໍຣິດ (Chlorite), ມີກາ (Mica), ຊາຍຜະລິດແກ້ວ (Quartz sand), ແກ້ວນາງຟານ (Quartz crystal),... | 1.000.000 |
| 2.3 | ແຮ່ທາດອະໂລຫະ ສຳລັບການກໍ່ສ້າງ (Construction Minerals): | |
| | – ຫີນປູນ (Limestone), ຫີນປູນໂດໂລມິດ (Dolomite), ກວັກຊິດ (Quartzite), ຫີນຊາຍ (Sandstone), ຫີນບາຊານ (Basalt), ຫີນອັນເດຊິດ (Andesite), ຫີນຣີໂອລິດ (Rhyolite), ຫີນດີໂອຣິດ (Diorite), ຫີນກຣານິດ (Granite), ຫີນກຣາໂນດີໂອຣິດ (Granodiorite),… | 1.000.000 |
| | – ດິນໜຽວ (Clay), ກາວແລງ (Kaolin), ຫີນແຮ່ (Gravel), ດິນດຳ, ດິນແດງ,... | 1.000.000 |
| 2.4 | ຫີນປະດັບ (Decorative Stones):<br>ຫີນອ່ອນ (Marble), ຫີນປາໂກດິດ (Pagodite), ຫີນແຊກປັງຕິນ (Serpentine), ຫີນກຣານິດ (Granite), ຫີນເນສ (Gneiss), ຫີນກະດານ (Slate), ແກ້ວນາງຟານ (Crystal Quartz),... | 1.500.000 |
| 2.5 | ແຮ່ທີ່ຜົວພັນກັບເກືອ ແລະ ເກືອປະເພດຕ່າງໆ (Evaporites): | |
| | – ຫີນກາວ (Gypsum), ອານຮິດຣິດ (Anhydrite),... | 1.000.000 |
| | – ເກືອກິນ (Halite),... | 100.000 |
| | – ເກືອໂປຕາສ (Potash), ເກືອມາເຍຊຽມ (Magnesium chlorite) ແລະ ເກືອອື່ນໆທີ່ພົວພັນ,... | 5.000.000 |
| 3 | **ໝວດແຮ່ທາດພະລັງງານເຊື້ອໄຟ** | |
| | – ຖ່ານລິກໄນ (Lignite), ຖ່ານຊັບບິທູມີນັດ (Sub-bituminous), ຖ່ານບິທູມີນັດ (Bituminous), ຖ່ານອັນຕຣາຊິດ (Anthracite),… | 2.000.000 |
| | – ກຣາຟິດ (Graphite),... | 500.000 |
| | – ຖ່ານຕົມ (Peat),... | 100.000 |
| | – ຫີນດິນດານບັນຈຸນ້ຳມັນ (Oil shale), ຫີນດິນດານບັນຈຸອາຍແກສ (Shale gas),… | 10.000.000 |
| 4 | ນ້ຳແຮ່ທາດ (mineral water), ນ້ຳຮ້ອນໃຕ້ດິນ (natural thermal water), ... | 200.000 |

9. ຈຳນວນເງິນທີ່ຕ້ອງແຈ້ງໃນໄລຍະຂໍລົງທຶນສຳຫຼວດແຮ່ທາດ

ໃນໄລຍະຂໍລົງທຶນສຳຫຼວດແຮ່ທາດ ຜູ້ລົງທຶນ ຫຼື ບໍລິສັດຕ້ອງແຈ້ງຈຳນວນເງິນທີ່ເປັນຂອງຕົນເອງ 2 ເທົ່າຕົວຂຶ້ນໄປ ຂອງຕົວເລກທີ່ກຳນົດໄວ້ໃນມາດຕາ 8 ຂອງຄຳແນະນຳສະບັບນີ້.

10. ປະສົບການ ແລະ ວິຊາການຂອງຜູ້ລົງທຶນ ຫຼື ບໍລິສັດ

ຜູ້ລົງທຶນ ຫຼື ບໍລິສັດໜຶ່ງທີ່ຂໍອະນຸຍາດລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຕ້ອງເປັນນິຕິບຸກຄົນ ຫຼື ບໍລິສັດ ທີ່ເຄີຍລົງທຶນ ແລະ ມີປະສົບການໃນກິດຈະການກ່ຽວກັບບໍ່ແຮ່ ມາກ່ອນ ຢ່າງໜ້ອຍ ຫ້າ ປີ.

ກໍລະນີ ຜູ້ສະເໜີຂໍລົງທຶນບໍ່ເຄີຍດຳເນີນທຸລະກິດກ່ຽວກັບບໍ່ແຮ່ ມາກ່ອນ ແລະ ບໍ່ມີວິຊາການພຽງພໍ ຜູ້ສະເໜີຂໍລົງທຶນ ຕ້ອງວ່າຈ້າງວິຊາການຢ່າງພຽງພໍ ຫຼື ບໍລິສັດ ທີ່ມີປະສົບການດ້ານທຸລະກິດກ່ຽວກັບບໍ່ແຮ່.

11. ການຈັດຕັ້ງປະຕິບັດ

ມອບໃຫ້ກົມທໍລະນີສາດ ແລະ ແຮ່ທາດ, ກົມຄຸ້ມຄອງບໍ່ແຮ່, ອົງການທີ່ກ່ຽວຂ້ອງຂອງລັດ ແລະ ຜູ້ສະເໜີຂໍລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ເປັນຜູ້ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້, ສຳລັບຜູ້ລົງທຶນ ຫຼື ບໍລິສັດທີ່ໄດ້ຮັບອະນຸຍາດ ໃຫ້ລົງທຶນ ແລະ ເຊັນສັນຍາກັບລັດຖະບານກ່ອນຄຳແນະນຳສະບັບນີ້ແລ້ວ ໃຫ້ປະຕິບັດຕາມເນື້ອໃນສັນຍາ ນັ້ນເລີຍ.

12. ຂໍ້ບັງຄັບໃຊ້

ຖ້າຜູ້ຂໍລົງທຶນ ຫຼື ບໍລິສັດປະກອບເອກະສານບໍ່ຄົບຖ້ວນຕາມທີ່ລະບຸໄວ້ໃນຄຳແນະນຳກ່ຽວກັບມາດຖານການລົງທຶນໃນກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ສະບັບນີ້ ກະຊວງພະລັງງານ ແລະ ບໍ່ແຮ່ ຈະບໍ່ຮັບພິຈາລະນາຄຳຮ້ອງຂໍລົງທຶນ.

13. ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ລັດຖະມົນຕີ

ດຣ.ຄຳມະນີ ອິນທິລາດ